# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 13 ພືສພາ 2007 ( 05-1-2007 )

---

## <u>ຍອມຮັບເອົາຄວາມຮັບຜິດຊອບ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ມັດທາຍ 7:1-5; ຢາໂກໂບ 4-1-3, 6-12

**<u>ຄໍາຖາມແຫ່ງຊີວິດ:</u>** ຂ້າພະເຈົ້າຈະຍອມຮັບເອົາຄວາມຮັບຜິດຊອບຊຶ່ງເປັນສ່ວນຂອງການແຕກແຍກນັ້ນໄດ້ຢ່າງໃດ?

**<u>ຄວາມຈິງໃນພຣະຄັມພີ:</u>** ໃນຂະນະທີ່ບໍ່ມີການຖືກຕ້ອງປອງດອງກັນ, ບັນດາຜູ້ທີ່ເຊື່ອຕ້ອງຍອມຮັບເອົາຄວາມຮັບຜິດຊອບຂອງການກະທໍາ ແລະນິສັຍຂອງຕົນໃຫ້ມີສ່ວນໃນການທີ່ບໍ່ຖືກຕ້ອງປອງດອງກັນນັ້ນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂື້ນເພື່ອຊ່ອຍທ່ານໃຫ້ເປັນຜູ້ສ້າງຄວາມສງົບສຸກທີ່ແທ້ຈິງ ແລະແກ້ໄຂບັນຫາຂໍ້ຂັດແຍ້ງສ່ວນຕົວຂອງແຕ່ລະຄົນໂດຍ:

- ການດັດແປງແກ້ໄຂ ແລະການຍອມຮັບເອົາຄວາມຮັບຜິດຊອບໃນແສງສະວ່າງແຫ່ງພຣະທັມຂອງພຣະເຈົ້າສໍາລັບສ່ວນຂອງທ່ານໃນການແຕກແຍກນັ້ນ ແລະ:
- ຈິງໃຈສາຣະພາບຄວາມຜິດຂອງທ່ານທີ່ອອກມາຈາກການກະທໍາ ແລະນິສັຍທີ່ຜິດບາບຂອງທ່ານ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "<u>**ແຜນການສອນ**</u>", ໝາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນໍາ:</u>** ຂຽນຄໍານີ້ " **ການເປັນຜູ້ສ້າງສັນຕິສຸກ** " ໃສ່ກະດານ:

**ອະທິບາຍ:** ໃນເມື່ອຜູ້ໃຫຍ່ຢູ່ໃນບັນຫາການຂັດແຍ້ງກັນກໍມັກຈະຈົ່ມວ່າ ແລະໂຍນຄວາມຜິດໃຫ້ຝ່າຍກົງກັນຂ້າມ ແລະອ້າງວ່າແຕ່ຕົນຖືກ ຕົນດີຢູ່ສເມີ.

- ໃນຖານະທີ່ພວກເຮົາເປັນຜູ້ທີ່ເຊື່ອ ພວກເຮົາກໍຄວນຮັບເອົາຄວາມຮັບຜິດຊອບນັ້ນເໝືອນພຣະເຢຊູ.
- ພວກເຮົາທີ່ເປັນຄຣິສຕຽນຕ້ອງພຍາຍາມເອົາຕາຂອງເຮົາອອກຈາກການເຫັນຜູ້ອື່ນເປັນຄົນຜິດ.

**1. <u>ປັບປຸງແກ້ໄຂຕົນເອງ:</u>** ( ມັດທາຍ 7:1-5)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ມັດທາຍ 7:1-5

2) **ຄໍາຖາມ:** 1. ທ່ານຊອກຫາຄວາມຜິດຂອງຄົນອື່ນງ່າຍກວ່າຊອກຫາຄວາມຜິດຂອງຕົນເອງບໍ່?

2. ທ່ານຈະເຮັດໃຫ້ນິສັຍຂອງທ່ານລົດນ້ອຍຈາກການໂຍນຄວາມຜິດໃຫ້ຄົນອື່ນໄດ້ຢ່າງໃດ?

3) **ອະທິບາຍ:** ໃຫ້ຮູ້ຈັກວ່າຄວາມບົກພ່ອງຂອງມະນຸດພວກເຮົານັ້ນມີແຕ່ຊອກຫາທາງແກ້ຕົວ, ພວກເຮົາຄວນເຂົ້າໃຈໃນຂໍ້ຄໍາສັ່ງຂອງພຣະເຢຊູຄຣິດທີ່ວ່າ ໃຫ້ພິຈາຣະນາຕົນເອງກ່ອນ.

4) **ຄໍາຖາມ:** (1) ທ່ານຈະຍອມຮັບການປັບປຸງແກ້ໄຂຕົນເອງໄດ້ຢ່າງໃດ? ທັງໆ ທີ່ທ່ານພຍາຍາມມາຫລາຍເທື່ອແລ້ວແຕ່ກໍບໍ່ໄດ້.

(2) ທ່ານຈະຮູ້ໄດ້ຢ່າງໃດວ່າຄວາມຜິດບາບຂອງທ່ານເຮັດໃຫ້ເກີດມີຄວາມຂັດແຍ້ງຂື້ນ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ມັດທາຍ 7:1-5

1. ຣະຫວ່າງການແກ້ໄຂ ກັບປ່ອຍປະລະເລີຍ ມີຄວາມແຕກຕ່າງກັນແນວໃດ?
2. ສິ່ງທີ່ກ່າວມານີ້ແມ່ນສິ່ງໃດທີ່ຍາກທີ່ສຸດສໍາລັບທ່ານທີ່ຈະເອົາມາປະຕິບັດ?
3. ແມ່ນຫຍັງທີ່ທ່ານຢາກໄດ້ຍິນຈາກຜູ້ທີ່ເຮັດຜິດຕໍ່ທ່ານ? ການສາຣະພາບຜິດບໍ? ການຂໍອະພັຍເດ?

**2. <u>ສັງເກດຮູ້ແຫລ່ງທີ່ມາຂອງຄວາມແຕກແຍກ:</u>** ( ຢາໂກໂບ 4:1-3)

1) ຂໍໃຫ້ອາສາສມັກອ່ານພຣະທັມ ຢາໂກໂບ 4:1-3

**ຄໍາຖາມ:**

2) ແມ່ນຫຍັງເປັນແຫລ່ງທີ່ມາຂອງຄວາມແຕກແຍກ?

3) ແມ່ນຫຍັງເປັນແຫລ່ງທີ່ມາຂອງຄວາມແຕກແຍກທີ່ຊາຕານສເນີໃຫ້?

4) **ອະທິບາຍ:** ແຫລ່ງຂອງຄວາມແຕກແຍກເກີດມາຈາກ: ຂ້າພະເຈົ້າຕ້ອງການອໍານາດ ແລະຖ້າຫາກຂ້າພະເຈົ້າບໍ່ໄດ້ຂ້າພະເຈົ້າຈະຕໍ່ສູ້ເອົາໃຫ້ໄດ້.

5) ຄໍາວ່າຕໍ່ສູ້ນັ້ນມີຢູ່ວ່າ (1) ແຍກຕົວອອກ, ໜີໄປຢູ່ຫ່າງແລ້ວໃຊ້ລົມປາກຕໍ່ສູ້.

(2) ຜິດຖຽງຕໍ່ສູ້ກັນໜ້າຕໍ່ໜ້າໃຜແພ້ ໃຜຊະນະ ແລ້ວກໍຫັນຫລັງໃຫ້ກັນ.

(3) ຕໍ່ສູ້ແບບຫາເຣື່ອງ ແລະຂົນຂວາຍຫາຜູ້ເຂົ້າຂ້າງຕົນ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ( ຢາໂກໂບ 4:1-3 )

1. ທ່ານຈະສາມາດແກ້ໄຂແຫລ່ງທີ່ມາຂອງຄໍາທີ່ວ່າ " ໃນເມື່ອພົບກັບປັນຫາການແຕກແຍກຂ້າພະເຈົ້າມີທາງຂອງຂ້າພະເຈົ້າເອງ " ນັ້ນໄດ້ຢ່າງໃດ?
2. ຖ້າທ່ານບໍ່ສາມາດຮັບຜູ້ທີ່ກ່າວໂທດທ່ານແລ້ວທ່ານຈະເຮັດແນວໃດ? ທ່ານຈະຊອກຫາເຂົາຢູ່ບໍ່?
3. ຄົນຍອມຮັບສາຣະພາບບາບກັບຄົນທີ່ບໍ່ຍອມສາຣະພາບບາບທີ່ທ່ານເຫັນນັ້ນ ປະເພດໃດມີຫລາຍກວ່າ?
   ( ໃນເຣື່ອງປັນຫາການແຕກແຍກນັ້ນເຮົາຈະຕ້ອງຖາມເຮົາເອງວ່າ ແມ່ນອໍານາດອັນໃດນໍທີ່ຂ້າພະເຈົ້າເອົາເຂົ້າມາໃຊ້ໃນຊີວິດນີ້? ເປັນຫຍັງຄວາມເປັນມະນຸດຂອງຄົນເຮົາຈຶ່ງອ່ອນແອແທ້?

**3. <u>ຍອມຢູ່ພາຍໃຕ້ພຣະເຈົ້າ:</u>** ຢາໂກໂບ 4:6-12

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ຢາໂກໂບ 4:6-12

2) **ອະທິບາຍ:** ໃຫ້ໃຊ້ ຢາໂກໂບ 4:7-11 ມາບັລຍາຍວ່າ ຜູ້ທີ່ເຊື່ອເປັນຜູ້ທີ່ນ້ອມໃຈຟັງພຣະເຈົ້າ

ທຸກປະການດ້ວຍຄວາມຖ່ອມໃຈ ແລະເປັນແບບຢ່າງທີ່ດີ, ເຂົ້າໃກ້ຊິດພຣະເຈົ້າ.

4) **ຄໍາຖາມ:** (1) ເປັນຫຍັງມະນຸດຈຶ່ງຕ້ອງຍອມເຊື່ອຟັງອົງພຣະຜູ້ເປັນເຈົ້າ?

(2) ການເຊື່ອຟັງພຣະເຈົ້າຂອງທ່ານໄດ້ສະແດງອອກຢ່າງໃດ?

(3) ໃຜເປັນຜູ້ທີ່ມີສິດທີ່ນໍາທ່ານມາຫາອົງພຣະຜູ້ເປັນເຈົ້າ?

(4) ໃນພຣະທັມຢາໂກໂບ 4:6-12 ໃນເວລາຢູ່ໃນເຫດການຂັດແຍ້ງ ແລະແຕກແຍກນັ້ນແມ່ນອັນໃດທີ່ເຮັດໃຫ້ທ່ານຍືນໝັ້ນຢູ່ໃນອົງພຣະຜູ້ເປັນເຈົ້າໄດ້?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ຢາໂກໂບ 4:6-12

1. ທ່ານສາມາດບັລຍາຍລັກສະນະຂອງມະນຸດທີ່ຢູ່ໃນເຫດການຂັດແຍ້ງໃຫ້ຄົນອື່ນຟັງໄດ້ຢ່າງໃດ?
2. ການເຮັດເປັນແບບຢ່າງໃຫ້ກັບຄົນທັມມະດາສາມັນນັ້ນອັນໃດຍາກກວ່າໝູ່ສໍາລັບທ່ານ?
3. ມັນເປັນການງ່າຍສໍາລັບທ່ານບໍ່ທີ່ທ່ານຈະນໍາພາຄົນອັນຕະພານ ຫລືກັບຄອບຄົວຂອງທ່ານເອງ?

**<u>ສລຸບ</u>:**

1. ທ່ານຢາໂກໂບ ໄດ້ເຫລົ່າເຣື່ອງການຂັດແຍ້ງສັ້ນ ໆທີ່ດີ ເປັນການສລຸບ.
2. ສິ່ງສໍາຄັນທີ່ໄດ້ຈາກບົດຮຽນນີ້ກໍຄື ການເປັນຄົນຖ່ອມຕົວ.
3. ການຍອມຮັບ, ການປັບປຸງແກ້ໄຂບັນຫາຕ່າງ ໆ ຂອງຕົວເຮົາເອງ.

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ປະເມີນເບິ່ງຕົວເອງເປັນຂັ້ນທໍາອິດຂອງການຂັດແຍ້ງ ແລະສ້າງຄວາມສງົບ.
- ການຍອມຮັບຜິດຊອບຕໍ່ການເຫັນແກ່ຕົວ ສາມາດຊ່ອຍປົກປ້ອງການແຕກແຍກໄດ້.
- ຜູ້ທີ່ເຊື່ອທັງຫລາຍທີ່ບໍ່ຍອມຢູ່ໃຕ້ພຣະເຈົ້າ ແລະຜູ້ທີ່ຕັ້ງຕົນເອງຂຶ້ນຢູ່ພາຍໃຕ້ການກ່າວໂທດຂອງຄົນອື່ນນັ້ນເປັນການເຮັດຜິດເປົ້າໝາຍ. ດັ່ງນັ້ນພວກເຮົາຄວນຍອມໃຫ້ຕົວເອງເປັນຂອງພຣະເຈົ້າເທົ່ານັ້ນຈຶ່ງຈະເປັນທີ່ຊອບພຣະທັຍພຣະເຈົ້າໄດ້.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )